ສໍານັກງານໃຫຍ່

ເລກທີ: 1062 /ທຄຕລ.2025
ນະຄອນຫຼວງວຽງຈັນ, ວັນທີ: 4/4/2025

# ໜັງສືແຈ້ງເຊີນ

**ເຖິງ** : ບັນດາບໍລິສັດ ຫ້າງຮ້ານຕົວແທນຈໍາໜ່າຍເຄື່ອງໄອທີ ໃນນະຄອນຫຼວງວຽງຈັນ.
**ເລື່ອງ:** ແຈ້ງເຊີນເຂົ້າຮ່ວມຍື່ນຊອງປະມູນລາຄາ ເຄື່ອງ HSM ຈໍານວນ 04 ໜ່ວຍ.
(ເຄື່ອງເຂົ້າລະຫັດຂໍ້ມູນທີ່ມີຄວາມປອດໄພສູງ)

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ຂໍແຈ້ງມາຍັງບັນດາບໍລິສັດ ແລະ ຫ້າງຮ້ານຕົວແທນຈໍາໜ່າຍເຄື່ອງໄອທີ ຊາບວ່າ ທຄຕລ ມີຄວາມຕ້ອງການ ເຄື່ອງ HSM (ເຄື່ອງເຂົ້າລະຫັດຂໍ້ມູນທີ່ມີຄວາມປອດໄພສູງ) ຈໍານວນ 04 ໜ່ວຍ. ເພື່ອມານໍາໃຊ້ເຂົ້າໃນວຽກງານວິຊາສະເພາະຂອງ ທະນາຄານ, ຈຶ່ງໄດ້ແຈ້ງເຊີນມາຍັງທ່ານເພື່ອຍື່ນຊອງເຂົ້າຮ່ວມປະມູນລາຄາ ດັ່ງມີລາຍລະອຽດຂ້າງລຸ່ມນີ້:

| ລ.ດ | ລາຍລະອຽດ ແລະ ຂໍ້ມູນຕ່າງໆ | ຈໍານວນ |
|---|---|---|
| 1. | - **ຍີ່ຫໍ້:** Thales<br>- **ລຸ້ນ:** payShield 10K<br>- **HSM License:** Premium License (Support: Visa, Mastercard, CUP, JCB, AMEX)<br>- **Support:** 1 Year.<br>- ຍ້າຍຂໍ້ມູນຈາກເຄື່ອງເກົ່າມາໃສ່ເຄື່ອງໃໝ່.<br>**ສະເປັກເຄື່ອງ:** Range of performance levels: 250 call per second<br>➢ **Financial services standards:**<br>• ISO: 9564, 10118, 11568, 13491, 16609<br>• ANSI: X3.92, X9.8, X9.9, X9.17, X9.19, X9.24, X9.31, X9.52, X9.97<br>• ASC X9 TR-31, X9 TR-34, X9 TG-3/TR-39 (ຕ້ອງຮອງຮັບ)<br>• APACS 40 & 70 | 04 ເຄື່ອງ |

**ເງື່ອນໄຂຂອງບໍລິສັດ ແລະ ຫ້າງຮ້ານຕົວແທນຈໍາໜ່າຍ ທີ່ມີຄວາມຕ້ອງການຍື່ນຊອງປະມູນລາຄາຕ້ອງປະກອບເອກະສານໃຫ້ຄົບຖ້ວນດັ່ງລຸ່ມນີ້:**

- **ເອກະສານ ຊອງທີ 1:**

1. ປະກອບເອກະສານໃນນາມນິຕິບຸກຄົນ ທີ່ດໍາເນີນທຸລະກິດຈໍາໜ່າຍເຄື່ອງອຸປະກອນໄອທີ ຢ່າງໜ້ອຍ 03 ປີຂຶ້ນໄປ, ສໍາເນົາໃບທະບຽນວິສາຫະກິດ, ໃບຢັ້ງຢືນການເສຍອາກອນປີ 2024.
2. ເອກະສານລາຍລະອຽດສະເປັກສິນຄ້າ, ການຮັບປະກັນສິນຄ້າ, ໄລຍະເວລາການຈັດສົ່ງສິນຄ້າ ແລະ ຂໍ້ມູນຕ່າງໆ ຕາມ format ທີ່ຕິດຄັດມາພ້ອມນີ້.



ເລກທີ 01, ຖະໜົນ: ປາງຄໍາ, ເມືອງ ຈັນທະບູລີ, ນະຄອນຫຼວງວຽງຈັນ, ສປປ ລາວ. ຕູ້ ປ.ນ: 2925, ໂທລະສັບ: (856-21) 213200-3, 223243-4, 255080-5
ແຟັກ: (856-21) 213202, 223012, 223245, Website: http:/www.bcel.com.la, E-mail: bcelhqv@bcel.com.la, SWIFT Code: COEBLALA

3. ເອກະສານຂ້າງເທິງແມ່ນໃຫ້ຍື່ນກ່ອນ ວັນສຸກ **ວັນທີ 11/04/2025 ເວລາ 11:00 ໂມງ** ໂດຍການສົ່ງຟາຍເຂົ້າ **E-mail:** procurement@bcel.com.la ແລະ ເອກະສານສະບັບແທ້ ເພື່ອກວດສະເປັກ ມາທີ່ ຂາອອກ-ຂາເຂົ້າ ພະແນກຫ້ອງການບໍລິຫານ-ການເງິນ ຊັ້ນ 4, ຕຶກ C.

- **ເອກະສານ ຊອງທີ 2: (ປິດຊອງ)**

1. ໃບສະເໜີລາຄາໃຫ້ລະບຸລາຄາຫົວໜ່ວຍແຕ່ລະລາຍການໃຫ້ລະອຽດ ແລະ ຕ້ອງລວມມູນຄ່າອາກອນທັງໝົດເປັນສະກຸນເງິນກີບໃຫ້ຄົບຖ້ວນ.
2. ຜູ້ສະໜອງຕ້ອງວາງເງິນຄໍ້າປະກັນການປະມູນຕໍ່າສຸດ 10% ຂອງມູນຄ່າທັງໝົດ ໂດຍໜັງສືຄໍ້າປະກັນທີ່ອອກໂດຍທະນາຄານພາຍໃນ **(ວັນໝົດອາຍຸໜັງສືຄໍ້າປະກັນຕ້ອງເຖິງ ວັນທີ 24/07/2025)** ຫຼື ແຊັກທີ່ວີຊ້າແລ້ວ (ທຄຕລ ບໍ່ຮັບເງິນສົດ), ພາຍຫຼັງປະກາດຜົນ ທຄຕລ ຈະສົ່ງໜັງສືຄໍ້າປະກັນດັ່ງກ່າວຄືນພາຍໃນ 10 ວັນ.
3. ໃນ **ວັນພະຫັດ ຕອນບ່າຍ ວັນທີ 24/04/2025 ເວລາ 13:30 ໂມງ** ແມ່ນມື້ເປີດຊອງປະມູນ ສະນັ້ນ, ໃຫ້ຜູ້ສະໜອງທີ່ຜ່ານການຄັດເລືອກຈາກເອກະສານຊອງທີ 1 ມາຍື່ນຊອງລາຄາດ້ວຍຕົນເອງ ຫຼື ສົ່ງຜູ້ຕາງໜ້າເຂົ້າຮ່ວມທີ່ຫ້ອງປະຊຸມໃຫຍ່ດອກຄູນ ຊັ້ນ 5 ອາຄານ C.

**ໝາຍເຫດ:**

- ທຄຕລ ຂໍສະຫງວນສິດ ປະຕິເສດຜູ້ສະໜອງທີ່ປະກອບເອກະສານ ບໍ່ຄົບຖ້ວນ ຫຼື ບໍ່ຖືກຕ້ອງຕາມການກໍານົດຂ້າງເທິງ.

**❖ ເງື່ອນໄຂຂອງສັນຍາລະຫວ່າງ ທຄຕລ ແລະ ຜູ້ສະໜອງທີ່ຊະນະການປະມູນ:**

1. ຜູ້ທີ່ຊະນະການປະມູນຈະໄດ້ເຊັນສັນຍາກັບ ທຄຕລ ແລະ ຮັບຜິດຊອບຄ່າທໍານຽມໃນການຈັດທະບຽນສັນຍາ.
2. ຖ້າຜູ້ຊະນະການປະມູນປະຕິເສດການເຊັນສັນຍາ ແມ່ນຕ້ອງຮັບຜິດຊອບຄ່າເສຍຫາຍໃຫ້ແກ່ ທຄຕລ ໃນອັດຕາ 10% ຂອງມູນຄ່າລວມທີ່ສະເໜີປະມູນ.

**ການຊໍາລະຈະແບ່ງຈ່າຍເປັນ 02 ງວດ ລຸ່ມນີ້:**

- **ງວດທີ 1:** ຊໍາລະ 90% ຂອງມູນຄ່າ ພາຍໃນ 25 ວັນ ລັດຖະການ, ພາຍຫຼັງໄດ້ຮັບເຄື່ອງຄົບຖ້ວນ, ໂອນຖ່າຍຂໍ້ມູນ, ຕິດຕັ້ງສໍາເລັດຖືກຕ້ອງ ແລະ ກວດກາຄວາມຖືກຕ້ອງຈາກຄະນະກໍາມະການຕິດຕາມກວດກາ.
- **ງວດທີ 2:** ຊໍາລະ 10% ຂອງມູນຄ່າ ພາຍຫຼັງຄົບກໍານົດການຄໍ້າປະກັນຄຸນະພາບສິນຄ້າ 12 ເດືອນ.

ດັ່ງນັ້ນ, ຈຶ່ງອອກແຈ້ງເຊີນມາຍັງທ່ານທີ່ມີຄວາມສົນໃຈເຂົ້າຮ່ວມຍື່ນຊອງປະມູນໃນຄັ້ງນີ້.

ຮກ. **ຜູ້ອໍານວຍການ**

ທະນາຄານ ການຄ້າຕ່າງປະເທດລາວ ມະຫາຊົນ
BANQUE POUR LE COMMERCE EXTERIEUR LAO PUBLIC
ທະນາຄານ ແຫ່ງ ສປປ ລາວ ວຽງຈັນ ນະຄອນ ຫລວງ

ນ. ພູແສງທອງ ອານຸລັກຄໍາ

**(ຕົວຢ່າງ) ລາຍລະອຽດເອກະສານການປະມູນ (ກະລຸນາຕື່ມຂໍ້ມູນ ແລະ ເຊັນຢັ້ງຢືນ)**

- ອີງຕາມໃບແຈ້ງປະມູນ ສະບັບເລກທີ ………..../ທຄຕລ, ລົງວັນທີ …………………..

| ລ/ດ | ຜູ້ສະໜອງ | ເງື່ອນໄຂ | | | | | | | | | ໝາຍເຫດ |
|---|---|---|---|---|---|---|---|---|---|---|---|
| | | ໃບທະບຽນວິສາຫະກິດ | ໃບຢັ້ງຢືນການເສຍອາກອນ 2020 | ໃບອະນຸຍາດດຳເນີນທຸລະກິດ 2021 | ໄລຍະເວລາໃນການດຳເນີນທຸລະກິດ | ຜົນງານຜ່ານມາ (ເຄີຍສະໜອງໃຫ້ພາກສ່ວນໃດແນ່) | ປະເພດ / ວັດສະດຸ / ຍີ່ຫໍ້ສິນຄ້າ | ປະເທດຜະລິດ | ການຮັບປະກັນສິນຄ້າ | ກຳນົດສົ່ງ (ວັນ) | |
| 1 | ບ/ສ……… | (xxx/ 02.01.2015) | (xxx/ 02.01.2015) | (xxx/ 02.01.2015) | …. ປີ | (ໃຫ້ລະບຸ) | | ປະເທດ……. | …. ປີ | …… | |

ໝາຍເຫດ: ຂໍ້ມູນທີ່ແຈ້ງຂ້າງເທິງນີ້ ເປັນຄວາມຈິງທຸກປະການ, ຖ້າມີຂໍ້ມູນຜິດພາດ ຂ້າພະເຈົ້າຂໍຮັບຜິດຊອບເອງທຸກປະການ.

ນະຄອນຫຼວງວຽງຈັນ, ວັນທີ ……………………

ຜູ້ອໍານວຍການບໍລິສັດ

ຜູ້ປະສານງານບໍລິສັດ:

ຊື່:

ໂທ: